ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ
ຄະນະສານແພ່ງ
ຂັ້ນລົບລ້າງ

ເລກທີ 63/ລລ.ພ
ລົງວັນທີ 25 ຕຸລາ 2017

# ຄຳພິພາກສາ

ຄະນະສານແພ່ງຂອງສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ

| | | | |
|---|---|---|---|
| | ທ່ານ | ຄຳພັນ ບຸນພາຄົມ | ປະທານ |
| | ທ່ານ | ນາງ ເກສອນ ພັນລັກ | ຄະນະ |
| | ທ່ານ | ນາງ ທັນສະໄໝ ຊານຸມຕີ | ຄະນະ |
| ນັ່ງພ້ອມດ້ວຍ | ທ່ານ | ຄຳຝັ້ນ ພົມມາວິເສດ | ຈ່າສານ |

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 25 ຕຸລາ 2017 ເວລາ 09 ໂມງ 30 ນາທີ ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນສູງສຸດ ເພື່ອພິຈາລະນາຄະດີແພ່ງ ເລກທີ 17/ຂຕ.ພ, ລົງວັນທີ 11 ທັນວາ 2015 ຂອງສານປະຊາຊົນແຂວງຫຼວງພະບາງ.

ລະຫວ່າງ

ທ້າວ ເພັດຈຳພອນ ຊຸນດາລາ ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ບ້ານຊຽງທອງ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ.............................................................. ໂຈດ

ທ້າວ ບຸນທະວີ ຄໍລະຍົກ.............................................................(ທະນາຍຄວາມຝ່າຍໂຈດ)

ນາງ ບຸນທັນ ອາຍຸ 58 ປີ, ສັນຊາດ ລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ບ້ານ ສັງຄະໂລກ, ເມືອງຫຼວງພະບາງ, ແຂວງ ຫຼວງພະບາງ.............................................................. ຈຳເລີຍ

ກ່ຽວເລື່ອງ : ທວງເອົາເງິນຄືນ.

ສານ
ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ອີງຕາມ ສິດ ແລະ ໜ້າທີ່ ຂອງສານປະຊາຊົນຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບ ປັບປຸງ ປີ 2009.

## ເນື້ອຄະດີ

ເຫັນຕາມເນື້ອໃນຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ອ້າງວ່າ: ໃນເບື້ອງຕົ້ນຕົນ ແລະ ທ້າວ ແສງວົງຈິດ ຢ່າງວິໄລ ໄດ້ມາຊື້ທີ່ດິນນຳນາງ ບຸນທັນ (ຈຳເລີຍ) ຈຳນວນ 02 ຕອນຄື: ຕອນທີໜຶ່ງມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ທີ່ດິນຕອນທີສອງມີເນື້ອທີ່ 01 ເຮັກຕາ 5.868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ທີ່ດິນຕັ້ງຢູ່ບ້ານ ສັງຄະໂລກ, ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ ໃນມູນຄ່າ 9.600.000 ບາດ ຕາມສັນຍາຊື້-ຂາຍທີ່ດິນ ສະບັບເລກທີ 01/ສດລ, ລົງວັນທີ 08 ມັງກອນ 2012 ພາຍຫຼັງທີ່ພວກຕົນໄດ້ຈ່າຍເງິນຄ່າທີ່ດິນໃຫ້ນາງ ບຸນທັນ (ຈຳເລີຍ) ໝົດແລ້ວ, ນາງ ບຸນທັນ ໄດ້ໂອນໃບຕາດິນອອກຊື່ທ້າວ ເພັດຈຳພອນ ຊຸນດາລາ+ທ້າວ ແສງວົງຈິດ ຢ່າງວິໄລ ຈາກນັ້ນ ພວກຕົນຈຶ່ງໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກທີ່ດິນຂອບເຂດແດນຂອງດິນຄືນໃໝ່ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີສອງ ຕາມໃບຕາດິນ ເລກ

ທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5.868 ຕາແມັດ ຕາມໃບຢັ້ງຢືນ ສະບັບເລກທີ 246/ຫຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ຫຼວງພະບາງ ຫຼັງຈາກນັ້ນ ພວກຕົນກໍໄດ້ເຂົ້າໄປຫານາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າທີ່ດິນເນື້ອທີ່ ຈຳນວນ 01 ເຮັກຕາ ທີ່ຂາດຫາຍໄປນັ້ນຄິດໄລ່ເປັນເງິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ພວກຕົນ, ແຕ່ນາງ ບຸນທັນ ປະຕິເສດບໍ່ຍອມສົ່ງເງິນຄືນໃຫ້ແກ່ພວກຕົນ ເມື່ອເຫດການເປັນແນວນັ້ນ ພວກຕົນຈຶ່ງໄດ້ຂຽນຄຳຮ້ອງຟ້ອງມາຍັງສານປະຊາຊົນແຂວງ ຫຼວງພະບາງ ເພື່ອທວງໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ພວກຕົນ.

ເຫັນຕາມເນື້ອໃນຄຳແກ້ຟ້ອງ ສະບັບລົງວັນທີ 10 ທັນວາ 2015 ຂອງນາງ ບຸນທັນ (ຈຳເລີຍ) ອ້າງວ່າ: ຕົນແມ່ນຮັບຮູ້ວ່າໄດ້ຂາຍທີ່ດິນ ຈຳນວນ 02 ຕອນ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແທ້, ສ່ວນການທີ່ທ້າວເພັດຈຳພອນ ຊຸນດາລາ ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງ ຫຼວງພະບາງ ເພື່ອທວງໃຫ້ຕົນສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5.952.055 ບາດ ຊຶ່ງໄດ້ອ້າງວ່າ ທີ່ດິນຕອນທີສອງ ຕາມໃບຕາດິນເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5.868 ຕາແມັດ ຂາດຫາຍໄປ 01 ເຮັກຕາ ນັ້ນຕົນແມ່ນບໍ່ຮັບຮູ້ເພາະວ່າໃບຕາດິນທັງ 02 ສະບັບນັ້ນ ເປັນໃບຕາດິນແຂບຄຳ ຊຶ່ງແມ່ນອົງການລັດກໍຄືຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ເປັນຜູ້ອອກໃຫ້, ກ່ອນຈະມີການຊື້-ຂາຍ ຜູ້ຊື້ກໍໄດ້ໄປກວດກາຂອບເຂດຂອງທີ່ດິນຕົວຈິງແລ້ວ ແລະ ຕິດກັບທີ່ດິນຂອງໃຜແດ່ທ້າວ ເພັດຈຳພອນ ຊຸນດາລາ ກໍຮັບຮູ້ ແລະ ເຫັນທີ່ດິນຕົວຈິງແລ້ວ ເພາະວ່າການຂາຍທີ່ດິນນັ້ນແມ່ນຂາຍຍົກ (ຂາຍທັງສອງຕອນພ້ອມກັນ) ໂດຍບໍ່ໄດ້ຂາຍເປັນຕາແມັດ ຖ້າວ່າເນື້ອທີ່ດິນຫາກບໍ່ຄົບຕາມທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ກ່າວອ້າງມານັ້ນ ຕົນກໍຈະຂາຍທີ່ດິນທັງສອງຕອນນັ້ນ ໃນລາຄາ 9.600.000 ບາດ ຄືເກົ່າ ດັ່ງນັ້ນ ຕົນຈະບໍ່ຂໍສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5.952.055 ບາດ ນັ້ນເປັນການຄິດໄລ່ເອົາເອງໂດຍຄິດໄລ່ເປັນຕາແມັດ ຕົນແມ່ນບໍ່ຮັບຮູ້ສະນັ້ນ ຕົນຈຶ່ງໄດ້ສະເໜີໃຫ້ສານປະຊາຊົນແຂວງ ຫຼວງພະບາງ ພິຈາລະນາຕັດສິນໃຫ້ຄວາມເປັນທຳແກ່ຕົນດ້ວຍ ເນື່ອງຈາກວ່າ ການຊື້-ຂາຍລະຫວ່າງຕົນກັບທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈຂອງທັງສອງຝ່າຍໂດຍຜ່ານອຳນາດການປົກຄອງບ້ານທຸກຂັ້ນ ແລະ ຖືກຕ້ອງຕາມຫຼັກການຂອງກົດໝາຍທຸກຢ່າງ ໂດຍຜ່ານທີ່ດິນ ແລະ ທະບຽນສານ, ຕົນຈະບໍ່ຍອມສົ່ງເງິນຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເດັດຂາດ.

## ຮູບຄະດີ

ເຫັນຄຳຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ຂອງສານປະຊາຊົນຂັ້ນຕົ້ນແຂວງຫຼວງພະບາງໄດ້ຕັດສິນໂດຍຊ້ອງໜ້າໂຈດ ແລະ ຈຳເລີຍ ບອກວ່າ: ຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ມີເຫດຜົນບາງສ່ວນ ສານຈຶ່ງນຳມາພິຈາລະນາ. ຄຳແກ້ຟ້ອງຂອງນາງ ບຸນທັນ (ຈຳເລີຍ) ສະບັບລົງວັນທີ 10 ທັນວາ 2015 ບໍ່ມີເຫດຜົນ ສານຈຶ່ງບໍ່ນຳມາພິຈາລະນາ, ໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນ ຈຳນວນ 5.951.273 ບາດຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ຖ້າວ່ານາງ ບຸນທັນ (ຈຳເລີຍ) ບໍ່ມີຄວາມສາມາດໃຊ້ແທນເງິນ ຈຳນວນ 5.951.273 ບາດ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນໃຫ້ປະກາດຂາຍທີ່ດິນພ້ອມດ້ວຍເຮືອນ ແລະ ໃຫ້ນຳເອົາເງິນຢູ່ເລກບັນຊີຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນສາຂາ ແຂວງ ຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ (ຈຳເລີຍ) ຕາມຄຳສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ມາໃຊ້ແທນໃຫ້ແກ່ໂຈດຈົນຄົບຕາມ ຈຳນວນ 5.951.273 ບາດ ແຕ່ຖ້າຫາກວ່າຍັງບໍ່ພໍເປັນເງິນຈຳນວນເທົ່າໃດແມ່ນໃຫ້ນາງ ບຸນທັນ (ຈຳເລີຍ) ຊອກມາໃຊ້ແທນໃຫ້ໂຈດຄົບຕາມຈຳນວນ ແຕ່ຖ້າຫາກວ່າເຫຼືອເປັນເງິນຈຳນວນເທົ່າໃດ ແມ່ນໃຫ້ສົ່ງຄືນໃຫ້ແກ່ນາງ ບຸນທັນ (ຈຳເລີຍ). ໃຫ້ນາງ ບຸນທັນ (ຈຳເລີຍ) ເສຍເງິນຄ່າອາກອນໃຫ້ແກ່ລັດ ຈຳນວນ 119.025 ບາດ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນເວລາປະຕິບັດຄຳຕັດສິນຂອງສານ, ໃຫ້ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເສຍເງິນຄ່າອາກອນໃຫ້ແກ່ລັດ ຈຳນວນ 15 ບາດ, ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວິຊາການລົງກວດກາທີ່ດິນ ຈຳນວນ 1.200.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ

(ໂຈດ), ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວິຊາການລັງກວດກາອາຍັດທີ່ດິນ ແລະ ເຮືອນ ຈຳນວນ 2.000.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າວາງສານ ຈຳນວນ 200.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ), ໃຫ້ນາງ ບຸນທັນ (ຈຳເລີຍ) ໃຊ້ແທນເງິນຄ່າເສື້ອປົກຫຼັງສຳນວນຄະດີ ຈຳນວນ 35.000 ກີບ ຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ).

ເຫັນໃບຮັບຈອງຂໍອຸທອນ ສະບັບເລກທີ 018/ຈສ.ພ, ລົງວັນທີ 17 ພະຈິກ 2016 ແລະ ຄຳຮ້ອງຂໍອຸທອນ ສະບັບລົງວັນທີ 02 ທັນວາ 2016 ຂອງນາງ ບຸນທັນ (ຈຳເລີຍ) ອ້າງວ່າ: ສານປະຊາຊົນແຂວງ ຫຼວງພະບາງ ໄດ້ອອກຄຳສັ່ງອາຍັດຊັບທຸກຢ່າງຄື: ທີ່ດິນພ້ອມເຮືອນ ແລະ ເງິນຝາກຢູ່ທະນາຄານນັ້ນ ເປັນການທາລຸນ, ໃຊ້ຄວາມຮຸນແຮງ ເພາະທີ່ດິນ ແລະ ເຮືອນເປັນບ່ອນພັກອາໄສ, ເປັນບ່ອນອຳນວຍຄວາມສະດວກໃຫ້ແກ່ຄອບຄົວ ເຊິ່ງຕົນບໍ່ໄດ້ສໍ້ໂກງຂອງໃຜມາສ້າງ, ສ່ວນທີ່ດິນ ແລະ ເຮືອນ ຕັ້ງຢູ່ກໍແມ່ນຕົນເປັນຜູ້ຊື້ ແລະ ເປັນເຈົ້າກຳມະສິດ ໂດຍບໍ່ມີສ່ວນກ່ຽວ ຂ້ອງກັບການຂາຍທີ່ດິນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແຕ່ເປັນຫຍັງສານຈຶ່ງອອກຄຳສັ່ງອາຍັດຊັບຂອງຕົນໄວ້, ອີກປະການໜຶ່ງ ການທີ່ສານປະຊາຊົນແຂວງ ຫຼວງພະບາງ ໄດ້ວິນິດໄສວ່າ ຕົນເປັນຜູ້ຮູ້ທີ່ມາຂອງດິນຕອນທີ່ຂາຍນັ້ນແມ່ນມີເນື້ອທີ່ 5.868 ຕາແມັດ ເຫັນວ່າ ບໍ່ມີມູນຄວາມຈິງ, ຜູ້ທີ່ຮູ້ປະຫວັດຄວາມເປັນມາຂອງດິນ ແມ່ນອຳນາດການປົກຄອງບ້ານ, ອົງການຄຸ້ມຄອງທີ່ດິນຂອງເມືອງ ແລະ ແຂວງເປັນຜູ້ຮູ້ດີ, ສ່ວນການເກັບລາຍຮັບແຕ່ລະໄລຍະນັ້ນ ກໍແມ່ນໜ້າທີ່ຂອງເຈົ້າໜ້າທີ່ອົງການຄຸ້ມຄອງທີ່ດິນ ເຊິ່ງຜູ້ກ່ຽວກໍມີແຕ່ປະຕິບັດພັນທະໃຫ້ຖືກຕ້ອງເທົ່ານັ້ນ, ດັ່ງນັ້ນ ຕົນຈຶ່ງສະເໜີຕໍ່ສານປະຊາຊົນພາກເໜືອເພື່ອຂໍຄວາມເປັນທຳ.

ເຫັນຄຳຖະແຫຼງ ສະບັບເລກ 13/ອຍກ.ພໜ, ລົງວັນທີ 28 ກຸມພາ 2017 ຂອງຫົວໜ້າອົງການໄອຍະການປະຊາຊົນພາກເໜືອວ່າ: ຄຳຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ຂອງສານປະຊາຊົນຂັ້ນຕົ້ນແຂວງຫຼວງພະບາງ ເປັນຄຳຕັດສິນທີ່ຍັງບໍ່ທັນຖືກຕ້ອງຕາມເຫດການຕົວຈິງຂອງຄະດີ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ມາດຕາ 245 ບາງສ່ວນ..

ເຫັນຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນທີ່ໄດ້ພິພາກສາໂດຍຊ້ອງໜ້າໂຈດ, ຈຳເລີຍ ແລະ ບຸກຄົນທີສາມ ບອກວ່າ: ຮັບເອົາຄຳຮ້ອງຂໍອຸທອນ ສະບັບລົງວັນທີ 02 ທັນວາ 2016 ຂອງນາງ ບຸນທັນ (ຈຳເລີຍ) ມາພິຈາລະນາ, ບອກວ່າ: ຄຳຮ້ອງຂໍອຸທອນດັ່ງກ່າວບໍ່ມີເຫດຜົນແຕ່ເປັນພື້ນຖານໃຫ້ສານພິຈາລະນາຄືນໃໝ່ໃຫ້ຖືກຕ້ອງຕາມກົດໝາຍ, ພິພາກສາປ່ຽນແປງຄຳຕັດສິນ ສະບັບເລກທີ 012/ຂຕ.ພ, ລົງວັນທີ 14 ພະຈິກ 2016 ຂອງສານປະຊາຊົນຂັ້ນຕົ້ນແຂວງ ຫຼວງພະບາງ ບາງສ່ວນ ບອກວ່າ: ໃຫ້ທ້າວ ເພັດຈຳພອນ (ໂຈດ) ເສຍອາກອນຂອງລັດ 2% ຂອງມູນຄ່າ 782 ບາດທີ່ຮ້ອງຟ້ອງເກີນ ແລະ ໃຫ້ຈຳເລີຍເສຍອາກອນຂອງລັດ 2% ຂອງມູນຄ່າ 5.951.273 ບາດ ທີ່ເສຍຄະດີໂດຍໃຫ້ເສຍເປັນເງິນກີບ, ສ່ວນການຄິດໄລ່ຕົວຈິງແມ່ນມອບໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານເປັນຜູ້ຄິດໄລ່ໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ປ່ຽນແປງພາກດ້ວຍເຫດນີ້ໃຫ້ກົງກັບພາກວິນິດໄສ ບອກວ່າ: ໃຫ້ລົບລ້າງສັນຍາຊື້-ຂາຍ ສະບັບເລກທີ 01/ສຄລ, ລົງວັນທີ 08 ມັງກອນ 2012 ບາງສ່ວນ ລົບລ້າງໃນສ່ວນທີ່ເປັນໂມຄະຄື: ເນື້ອທີ່ 01 ເຮັກຕາ 5.868 ຕາແມັດ ອອກຊື່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ທ້າວ ແສງວົງຈິດ (ບຸກຄົນທີສາມ) ຖິ້ມ ແລ້ວມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງ ອອກໃບຕາດິນໃໝ່ ທີ່ມີເນື້ອທີ່ 5.868 ຕາແມັດ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ທ້າວ ແສງວົງຈິດ (ບຸກຄົນທີສາມ) ນອກນັ້ນແມ່ນຢັ້ງຢືນເອົາຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນແຂວງ ຫຼວງພະບາງ ທັງໝົດ. ໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບເງິນວາງສານຢູ່ສານຂັ້ນອຸທອນ ຈຳນວນ 200.000 ກີບ ເອົາເອງ, ໃຫ້ນາງ ບຸນທັນ (ຈຳເລີຍ) ຮັບຜິດຊອບເງິນຄ່າທຳນຽມສານຢູ່ສານຂັ້ນອຸທອນ ຈຳນວນ 251.000 ກີບ ເອົາເອງ, ໃຫ້ນາງ ບຸນທັນ (ຈຳເລີຍ) ຈ່າຍເງິນຄ່າຂໍອຸທອນ ຈຳນວນ 30.000 ກີບ.

ເຫັນໃບຮັບການຈອງຂໍລົບລ້າງ ສະບັບເລກທີ 05/ຈສ.ພ, ລົງວັນທີ 11 ເມສາ 2017 ແລະ ຄໍາຮ້ອງຂໍລົບລ້າງ ຕາມຂາເຂົ້າເລກທີ 392, ລົງວັນທີ 10 ພຶດສະພາ 2017 ຂອງນາງ ບຸນທັນ (ຈໍາເລີຍ).

ເຫັນຄໍາຖະແຫຼງ ສະບັບເລກທີ 104/ອອປສ, ລົງວັນທີ 11 ກັນຍາ 2017 ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

## ວິນິດໄສ

ເມື່ອໄດ້ຄົ້ນຄວ້າເອກະສານຕ່າງໆໃນສໍານວນຄະດີເລື່ອງນີ້ໃນທີ່ປະຊຸມສານແລ້ວ

ເຫັນວ່າ ຄໍາຮ້ອງຂໍລົບລ້າງ ຕາມຂາເຂົ້າເລກທີ 392, ລົງວັນທີ 10 ພຶດສະພາ 2017 ຂອງນາງ ບຸນທັນ (ຈໍາເລີຍ) ໄດ້ປະຕິບັດຖືກຕ້ອງຕາມກໍານົດເວລາທີ່ບົ່ງໄວ້ໃນ ມາດຕາ 290 ຂອງກົດໝາຍວ່າດ້ວຍ ການ ດໍາເນີນຄະດີແພ່ງ ສະບັບປັບປຸງປີ 2012 ແລ້ວ ດັ່ງນັ້ນ ຈຶ່ງຮັບມາພິຈາລະນາ.

ການທີ່ນາງ ບຸນທັນ (ຈໍາເລີຍ) ໄດ້ຍື່ນຄໍາຮ້ອງຂໍລົບລ້າງມາຍັງສານປະຊາຊົນສູງສຸດຂັ້ນລົບລ້າງໂດຍອ້າງວ່າ: ສະເໜີໃຫ້ລົບລ້າງຄໍາພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີນາ 2017 ຂອງສານປະຊາຊົນພາກເໜືອ ຂັ້ນອຸທອນ ແລະ ລົບລ້າງຄໍາສັ່ງອາຍັດຊັບທີ່ດິນ ແລະ ເຮືອນ ພ້ອມດ້ວຍປຶ້ມບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາ ແຂວງຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ (ຈໍາເລີຍ) ຖື.

ເມື່ອຄະນະສານແພ່ງຂອງສານປະຊາຊົນສູງສຸດຂັ້ນລົບລ້າງໄດ້ຄົ້ນຄວ້າພິຈາລະນາຄໍາຮ້ອງຂໍລົບລ້າງຂອງຈໍາເລີຍ ຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສແລ້ວ ເຫັນວ່າ ຄໍາຮ້ອງຂໍລົບລ້າງສະບັບດັ່ງກ່າວບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ ເນື່ອງຈາກວ່າ: ໂດຍອີງຕາມປຶ້ມຕິດຕາມໃບແຈ້ງກໍາມະສິດກ່ຽວກັບ ສິດນໍາໃຊ້ທີ່ດິນຂອງພະນັກງານທີ່ໂຄງການອອກໃບຕາດິນຕາມຂາເຂົ້າ ເລກທີ 24, ລົງວັນທີ 23 ພະຈິກ 2015 ຂອງສານປະຊາຊົນແຂວງຫຼວງພະບາງ ແລະ ອີງຕາມໃບແຜນທີ່ດິນສະເພາະຕອນ ສະບັບລົງວັນທີ 13 ທັນວາ 2002 ຂອງໂຄງການອອກໃບຕາດິນທີ່ດິນສະເພາະຕອນ ແຂວງຫຼວງພະບາງ ຕາມຂາເຂົ້າເລກທີ 24, ລົງວັນທີ 23 ພະຈິກ 2015 ຂອງສານປະຊາຊົນແຂວງ ຫຼວງພະບາງ ກໍໄດ້ກໍານົດເນື້ອທີ່ດິນຕອນດັ່ງກ່າວແມ່ນ 5.868 ຕາແມັດ ໃນໄລຍະຜ່ານມາຜູ້ກ່ຽວກໍຍັງເສຍພາສີນໍາໃຊ້ທີ່ດິນໃນເນື້ອທີ່ພຽງ 5.868 ຕາແມັດ ເທົ່ານັ້ນ, ແຕ່ພາຍຫຼັງທີ່ຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ແຂວງຫຼວງພະບາງ ໄດ້ອອກໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ພັດລະບຸເນື້ອທີ່ 1 ເຮັກຕາ 5.868 ຕາແມັດ ໃຫ້ແກ່ນາງ ບຸນທັນ (ຈໍາເລີຍ) ຊຶ່ງຜູ້ກ່ຽວກໍຮັບຮູ້ວ່າ ທີ່ດິນຕອນດັ່ງກ່າວມີເນື້ອທີ່ເກີນຕົວຈິງ 1 ເຮັກຕາ ໂດຍອີງຕາມໃບເກັບເງິນຄ່ານໍາໃຊ້ທີ່ດິນ ຕາມຂາເຂົ້າເລກທີ 24, ລົງວັນທີ 23 ພະຈິກ 2015 ຂອງສານປະຊາຊົນແຂວງ ຫຼວງພະບາງ, ແຕ່ຜູ້ກ່ຽວກໍຍັງເມີນເສີຍບໍ່ໄດ້ມີການສະເໜີຕໍ່ການຈັດຕັ້ງບ້ານ ຫຼື ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບເພື່ອທໍາການແກ້ໄຂ ແລະ ອອກໃບຕາດິນໃຫ້ຖືກຕ້ອງຕາມເນື້ອທີ່ດິນຕົວຈິງທີ່ໄດ້ວັດແທກ ຕາມໃບແຜນທີ່ດິນສະເພາະຕອນ ສະບັບລົງວັນທີ 13 ທັນວາ 2002 ຂອງໂຄງການອອກໃບຕາດິນທີ່ດິນສະເພາະຕອນແຂວງ ຫຼວງພະບາງ, ອີກປະການໜຶ່ງໃນເວລາທີ່ໂຈດ ແລະ ຈໍາເລີຍ ໄດ້ມີການຊື້-ຂາຍທີ່ດິນນໍາກັນ ຕາມສັນຍາຊື້-ຂາຍ ສະບັບເລກທີ 01/ສຄລ, ສະບັບລົງວັນທີ 8 ມັງກອນ 2012 ນັ້ນ ຈໍາເລີຍກໍບໍ່ໄດ້ມີການແຈ້ງເນື້ອທີ່ດິນຕອນດັ່ງກ່າວໃຫ້ໂຈດຊາບແຕ່ຢ່າງໃດ ໂດຍມີການປິດບັງເນື້ອທີ່ດິນ 1 ເຮັກຕາ 5.868 ຕາແມັດ ຊຶ່ງເນື້ອທີ່ດິນຕົວຈິງມີພຽງ 5.868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003, ຊຶ່ງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ຫຼວງພະບາງ ກໍໄດ້ຢັ້ງຢືນ ສະບັບເລກທີ 205/ພຊສ, ລົງວັນທີ 02 ກຸມພາ 2016 ເນື້ອທີ່ດິນຕອນດັ່ງກ່າວຕົວຈິງມີ ເນື້ອທີ່ 5.868 ຕາແມັດ ແຕ່ເນື່ອງຈາກວ່າ ມີການພິມຜິດ, ດັ່ງນັ້ນ ໂດຍອີງຕາມມາດຕາ 18, 21 ແລະ 40 ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ແລ້ວ ເຫັນວ່າ ສັນຍາຊື້-ຂາຍ ສະບັບເລກທີ 01/ສຄລ, ລົງວັນທີ 08 ມັງກອນ 2012 ລະຫວ່າງໂຈດ ແລະ ຈໍາເລີຍ ເປັນໂມຄະບາງສ່ວນ, ອີກປະການໜຶ່ງ ການທີ່ສານປະຊາຊົນແຂວງ ຫຼວງພະບາງ ໄດ້ອອກຄໍາສັ່ງອາຍັດຊັບຕາມຄໍາສັ່ງອາຍັດຊັບ ສະບັບເລກທີ 008/ຂຕ.ພ, ລົງວັນທີ 10 ສິງຫາ 2016 ກໍເນື່ອງຈາກວ່າ ຊັບດັ່ງກ່າວມີການພົວພັນກັບຄະດີລະຫວ່າງ ໂຈດ ແລະ ຈໍາເລີຍ ດັ່ງນັ້ນ ການອອກຄໍາສັ່ງອາຍັດຊັບຂອງ

ສານປະຊາຊົນແຂວງ ຫຼວງພະບາງ ນັ້ນ ກໍເພື່ອເປັນການຮັບປະກັນສິດຜົນປະໂຫຍດຂອງຄູ່ຄວາມ ຈຶ່ງເຫັນວ່າ ເປັນການຖືກຕ້ອງສອດຄ່ອງຕາມ ມາດຕາ 123 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ເຫັນວ່າ ຈຳເລີຍ ໄດ້ນຳເງິນມາວາງສານ ຈຳນວນ 4.434.000 ກີບ ເພື່ອເປັນການລົງເກັບກຳຂໍ້ມູນ, ຕໍ່ກັບຈຳນວນເງິນດັ່ງກ່າວ ແມ່ນໄດ້ໃຊ້ຈ່າຍເຂົ້າໃນການເກັບກຳຂໍ້ມູນໝົດແລ້ວ ເຫັນວ່າ ຈຳເລີຍເປັນຝ່າຍເສຍຄະດີ ຈຶ່ງເຫັນຄວນໃຫ້ຝ່າຍຈຳເລີຍ ເປັນຜູ້ຮັບຜິດຊອບເອງ, ຕໍ່ກັບເຫດຜົນທີ່ກ່າວມາຂ້າງເທິງ ສານປະຊາຊົນສູງສຸດຂັ້ນລົບລ້າງບໍ່ສາມາດພິຈາລະນາໃຫ້ຈຳເລີຍໄດ້, ດັ່ງນັ້ນ ສານຂັ້ນລົບລ້າງຈຶ່ງເຫັນຄວນຢັ້ງຢືນຕາມຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີນາ 2017 ຂອງສານປະຊາ ຊົນພາກເໜືອຂັ້ນອຸທອນທັງໝົດ.

ເຫັນວ່າ ຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີ ນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນ ໄດ້ປະຕິບັດກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ, ການຕີຄວາມໝາຍຂອງເຫດການ, ການນຳໃຊ້ມາດຕາ, ກົດໝາຍຕໍ່ເນື້ອໃນເຫດການຂອງຄະດີຖືກຕ້ອງສອດຄ່ອງ ຕາມມາດຕາ 273 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ສະນັ້ນ ສານຂັ້ນລົບລ້າງຈຶ່ງເຫັນຄວນຢັ້ງຢືນຕາມຄຳພິພາກສາຂອງສານປະຊາຊົນພາກເໜືອຂັ້ນອຸທອນທັງໝົດ.

ການທີ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ຖະແຫຼງຕໍ່ສານຂັ້ນລົບລ້າງວ່າ: ຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີ ນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນ ໄດ້ປະຕິບັດກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ, ການຕີຄວາມໝາຍຂອງເຫດການ, ການນຳໃຊ້ມາດຕາ, ກົດໝາຍຕໍ່ເນື້ອໃນເຫດການຂອງຄະດີຖືກຕ້ອງສອດຄ່ອງຕາມ ມາດຕາ 273 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ແລ້ວນັ້ນ ເຫັນວ່າ ເປັນຄຳເຫັນທີ່ມີເຫດຜົນ.

ເຫັນວ່ານາງ ບຸນທັນ (ຈຳເລີຍ) ເປັນຜູ້ຮ້ອງຂໍລົບລ້າງຈຶ່ງໃຫ້ເສຍຄ່າຂໍລົບລ້າງ ຕາມມາດຕາ 24 ຂອງກົດໝາຍວ່າດ້ວຍ ຄ່າທຳນຽມສານ.

ເຫັນຕາມມາດຕາ 18, 21 ແລະ 40 ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008;

ເຫັນຕາມມາດຕາ 273, 287, 288, 290, 292, 296, 297, 298, 299, 300 ແລະ 302 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;

ເຫັນຕາມມາດຕາ 24 ຂອງກົດໝາຍວ່າດ້ວຍ ຄ່າທຳນຽມສານ ສະບັບປັບປຸງ.

## ດ້ວຍເຫດນີ້

ຄະນະສານແພ່ງຂອງສານປະຊາຊົນສູງສຸດ

ຈຶ່ງໄດ້ພິພາກສາຄະດີນີ້ເປັນຂັ້ນລົບລ້າງ ແລະ ຂັ້ນສຸດທ້າຍທາງດ້ານກົດໝາຍ

ຕາມຮູບຄະດີ: ຮັບເອົາຄຳຮ້ອງຂໍລົບລ້າງ ຕາມຂາເຂົ້າເລກທີ 392, ລົງວັນທີ 10 ພຶດສະພາ 2017 ຂອງນາງ ບຸນທັນ (ຈຳເລີຍ) ມາພິຈາລະນາ.

ຕາມກົດໝາຍ: ຄຳຮ້ອງຂໍລົບລ້າງສະບັບດັ່ງກ່າວບໍ່ມີເຫດຜົນພຽງພໍທາງດ້ານກົດໝາຍ.

ພິພາກສາ: ຍົກເລີກຄຳຮ້ອງຂໍລົບລ້າງສະບັບດັ່ງກ່າວຖິ້ມ ແລ້ວຢັ້ງຢືນເອົາຕາມຄຳພິພາກສາ ສະບັບເລກທີ 005/ອທ.ພ, ລົງວັນທີ 31 ມີ ນາ 2017 ຂອງສານປະຊາຊົນພາກເໜືອຂັ້ນອຸທອນທັງໝົດ.

ໃຫ້ນາງ ບຸນທັນ (ຈຳເລີຍ) ເສຍຄ່າຂໍລົບລ້າງ ຈຳນວນ 40.000 ກີບ.

ຄຳພິພາກສາສະບັບນີ້ ມີຜົນບັງຄັບປະຕິບັດ ນັບແຕ່ວັນນີ້ເປັນຕົ້ນໄປ.

ປະທານຄະນະສານ

ຈ່າສານ

ຄຳພັນ ບຸນພາຄົມ

Khamphanh BOUNPHAKHOM